ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການຂະຫຍາຍທຸລະກິດຂອງທະນາຄານທຸລະກິດ

ຮຽນ ທ່ານຜູ້ອ່ານ ທີ່ນັບຖື ແລະ ຮັກແພງ! ຄືຮູ້ນຳກັນແລ້ວວ່າ ທະນາຄານທຸລະກິດ ແມ່ນການເຄື່ອນໄຫວທຸລະກິດ ດ້ວຍການຮັບຝາກເງິນ, ການສະໜອງສິນເຊື່ອ, ການໃຫ້ບໍລິການຊຳລະ ແລະ ການຊື້-ຂາຍເງິນຕາ. ນອກຈາກນັ້ນ ຍັງສາມາດເປັນຕົວແທນໃຫ້ບໍລິການດ້ານການເງິນ, ໃຫ້ຄຳປຶກສາດ້ານການເງິນ ແລະ ການລົງທຶນ, ໃຫ້ບໍລິການເກັບຮັກສາວັດຖຸມີຄ່າ ແລະ ໃຫ້ບໍລິການອື່ນໆ. ຊຶ່ງນອກຈາກການເຄື່ອນໄຫວທຸລະກິດດັ່ງກ່າວແລ້ວ ທະນາຄານຄານທຸລະກິດຍັງສາມາດຂະຫຍາຍທຸລະກິດຂອງຕົນໄດ້ຕື່ມອີກ. ສະນັ້ນ, ຄັ້ງນີ້ຜູ້ຂຽນຈະມານຳສະເໜີຕໍ່ກັບ ການຂະຫຍາຍທຸລະກິດ ຂອງທະນາຄານທຸລະກິດ ແລະ ສາມາດລົງທຶນກັບນິຕິບຸກຄົນອື່ນ ທີ່ບໍ່ແມ່ນສະຖາບັນການເງິນ ວ່າມີຄືແນວໃດ ໃຫ້ໄດ້ຮັບຊາບ.

ໂດຍອີງຕາມ ພາກທີ III, ໝວດທີ 2, ມາດຕາ 43 ການຂະຫຍາຍທຸລະກິດ ຂອງທະນາຄານທຸລະກິດ ຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 (ສະບັບປັບປຸງ) ໄດ້ກຳນົດວ່າ: ທະນາຄານທຸລະກິດ ສາມາດຂະຫຍາຍທຸລະກິດຂອງຕົນ ດ້ວຍການສ້າງຕັ້ງສາຂາ, ໜ່ວຍບໍລິການ, ຫ້ອງການຜູ້ຕາງໜ້າ, ການລົງທຶນໃນສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນ ທີ່ບໍ່ແມ່ນສະຖາບັນການເງິນ ໂດຍໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ. ສຳລັບການສ້າງຕັ້ງໜ່ວຍບໍລິການ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ. ຊຶ່ງການຂະຫຍາຍທຸລະກິດດັ່ງກ່າວນັ້ນ ຕ້ອງປະກອບມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ທຶນຂະຫຍາຍທຸລະກິດມີພຽງພໍ;
2. ກົງຈັກການຄຸ້ມຄອງບໍລິຫານທຸລະກິດ, ລະບົບກວດສອບບັນຊີພາຍໃນ ມີປະສິດທິພາບ;
3. ລະບົບຮັບ ສົ່ງຂໍ້ມູນ ຂ່າວສານ ທີ່ມີປະສິດທິພາບ ສຳລັບວຽກງານຄຸ້ມຄອງ;
4. ການປະຕິບັດລະບຽບ ກ່ຽວກັບການຮັກສາຄວາມໝັ້ນຄົງໄດ້ດີ ຕາມລະບຽບຂອງທະນາຄານແຫ່ງ ສປປ ລາວ.

ນອກຈາກນັ້ນ ທະນາຄານທຸລະກິດ ຍັງສາມາດລົງທຶນໃນທຸລະກິດທາງດ້ານການເງິນ ແລະ ລົງທຶນໃນນິຕິບຸກຄົນອື່ນ ທີ່ບໍ່ແມ່ນສະຖາບັນການເງິນໄດ້ ດັ່ງນີ້:

ລົງທຶນໃນທຸລະກິດດ້ານການເງິນ ແມ່ນສາມາດລົງທຶນສ້າງຕັ້ງ ຫຼື ເຂົ້າຖືຮຸ້ນ ໃນບໍລິສັດ ທີ່ດຳເນີນທຸລະກິດທາງດ້ານການເງິນອື່ນ ທີ່ບໍ່ແມ່ນທຸລະກິດການທະນາຄານ ຄື: ທຸລະກິດຫຼັກຊັບ, ທຸລະກິດປະກັນໄພ, ທຸລະກິດເຊົ່າສິນເຊື່ອ ແລະ ທຸລະກິດທາງດ້ານການເງິນອື່ນ ຕາມການອະນຸຍາດ ຂອງທະນາຄານແຫ່ງ ສປປ ລາວ.

ລົງທຶນໃນນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ ທະນາຄານທຸລະກິດທີ່ມີຄວາມເຂັ້ມແຂງທາງດ້ານການເງິນ ສາມາດລົງທຶນໃນນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມເຂັ້ມແຂງ ແລະ ດຳເນີນທຸລະກິດມີປະສິດທິຜົນ ໃນອັດຕາສ່ວນບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນຂອງຕົນ ແລະ ບໍ່ເກີນຊາວສ່ວນຮ້ອຍ ຂອງຮຸ້ນທີ່ສາມາດລົງຄະແນນສຽງໄດ້ ໃນນິຕິບຸກຄົນນັ້ນ ຊຶ່ງການຖືຮຸ້ນທັງໝົດໃນນິຕິບຸກຄົນອື່ນ ທີ່ບໍ່ແມ່ນສະຖາບັນການເງິນ ບໍ່ໃຫ້ເກີນ ຫ້າສິບສ່ວນຮ້ອຍ ຂອງທຶນຈົດທະບຽນຂອງທະນາຄານທຸລະກິດ.

*ຕົວຢ່າງ:* ທະນາຄານທຸລະກິດ ເອ (A) ນໍາທຶນ ເຂົ້າໄປລົງທຶນກັບບໍລິສັດ ອຸດສາຫະກໍາ ຂາອອກ-ຂາເຂົ້າ ຈໍາກັດໜຶ່ງແມ່ນໄດ້ບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນທະນາຄານທຸລະກິດ ແລະ ສາມາດລົງທຶນກັບບໍລິສັດອື່ນທີ່ບໍ່ແມ່ນສະຖາບັນການເງິນໄດ້ອີກ ໝາຍຄວາມວ່າ ບໍລິສັດລະບໍ່ເກີນສິບສ່ວນຮ້ອຍເຊັ່ນກັນ ຊຶ່ງການຖືຮຸ້ນທັງໝົດລວມກັນບໍ່ໃຫ້ເກີນ ຫ້າສິບສ່ວນຮ້ອຍຂອງທຶນຈົດທະບຽນທະນາຄານທຸລະກິດ.

ນັ້ນແມ່ນການຂະຫຍາຍທຸລະກິດ ຂອງທະນາຄານທຸລະກິດ ຊຶ່ງບໍ່ພຽງແຕ່ດໍາເນີນທຸລະກິດການທະນາຄານເທົ່ານັ້ນ ແຕ່ຍັງສາມາດຂະຫຍາຍທຸລະກິດ ໃນການລົງທຶນໃນທຸລະກິດທາງດ້ານການເງິນ ແລະ ການລົງທຶນໃນນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ ໄດ້ເຊັ່ນດຽວກັນ. ແຕ່ຕ້ອງມີເງື່ອນໄຂຢ່າງຄົບຖ້ວນ, ຮັບປະກັນຄວາມເຂັ້ມແຂງທາງດ້ານການເງິນ ຂອງທະນາຄານທຸລະກິດເອງ ແລະ ຮັບປະກັນວ່ານິຕິບຸກຄົນທີ່ບໍ່ແມ່ນສະຖາບັນການເງິນນັ້ນ ແມ່ນມີຄວາມເຂັ້ມແຂງ ແລະ ດໍາເນີນທຸລະກິດຢ່າງມີປະສິດທິຜົນ. ຫວັງວ່າການນໍາສະເໜີດັ່ງກ່າວຈະເປັນຂໍ້ມູນໃຫ້ກັບບັນດາທ່ານຜູ້ອ່ານ ແລະ ນັກຮຽນຮູ້ຕໍ່ກັບການຂະຫຍາຍທຸລະກິດ ຂອງທະນາຄານທຸລະກິດຢູ່ ສປປ ລາວ.

**# ບົດຄວາມໂດຍ: ວັນນະສິດ ສິດທິລາດວົງສາ, ກົມນິຕິກໍາ ທະນາຄານແຫ່ງ ສປປ ລາວ**

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**